ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ກະຊວງອຸດສາຫະກຳ ແລະ ການຄ້າ** ເລກທີ 392 /ອຄ.ກອກ.

**ກົມອຸດສາຫະກຳ** ນະຄອນຫລວງວຽງຈັນ, ວັນທີ່ **06 ກໍລະກົດ 2010**

# ບົດແນະນຳ

**ຮຽນ:** ທ່ານ ຫົວໜ້າພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງວຽງຈັນ.

**ເລື່ອງ:** ການລົງກວດກາ ແລະ ດັດສົມໂຮງງານຂ້າສັດ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານຂ້າສັດ ເລກທີ 0942/ອຄ, ລົງວັນທີ່ 13/5/2010.
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກົມອຸດສາຫະກຳ ເລກທີ 2457/ອຄ.ຈພງ, ລົງວັນທີ່ 25/12/09.

ເພື່ອເປັນການຈັດຕັ້ງປະຕິບັດ ຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານຂ້າສັດ ໃຫ້ມີຄວາມເປັນເອກະພາບ ແລະ ຖືກຕ້ອງຕາມຈຸດປະສົງເປົ້າໝາຍຂອງການຄຸ້ມຄອງ ແລະ ສົ່ງເສີມ ໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ. ກົມອຸດສາຫະກຳ ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ລົງກວດກາ ແລະ ດັດສົມ ບັນດາໂຮງງານຂ້າສັດທັງໝົດ ທີ່ຕັ້ງຢູ່ພາຍໃນແຂວງຂອງທ່ານ ຕາມມາດຕະຖານ ແລະ ເງື່ອນໄຂ ທີ່ໄດ້ກຳນົດໄວ້ ແລະ ຂໍແນະນຳເພີ້ມເຕີມ ກ່ຽວກັບວິທີການດັດສົມໂຮງງານ ໂດຍແບ່ງອອກເປັນ 3 ຂັ້ນຕອນ ຄືດັ່ງນີ້:

**1/. ຂັ້ນຕອນທີໜຶ່ງ:** ລົງເກັບກຳຂໍ້ມູນໂຮງງານ.

ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງວຽງຈັນ ສົມທົບກັບຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ ລົງເກັບກຳຂໍ້ມູນ ບັນດາໂຮງງານຂ້າສັດທັງໝົດທີ່ໄດ້ຮັບອະນຸຍາດດຳເນີນກິດຈະການມາກ່ອນ, ລວມທັງໂຮງງານຂ້າສັດທີ່ເຄື່ອນໄຫວບໍ່ໄດ້ຮັບອະນຸຍາດ ຢູ່ພາຍໃນແຂວງຂອງທ່ານ, ຕາມແບບຟອມທີ (1) ແລະ ສັງລວມເປັນບັນຊີໂຮງງານລະອຽດ ຕາມແບບຟອມທີ (2) ຂັດຕິດມາພ້ອມນີ້.

**2/. ຂັ້ນຕອນທີສອງ:** ລົງກວດກາມາດຕະຖານໂຮງງານ.

ໃຫ້ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງວຽງຈັນ ສົມທົບກັບຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ລົງກວດກາ ແລະ ດັດສົມບັນດາໂຮງງານຂ້າສັດທັງໝົດ ຕາມບັນຊີສັງລວມ ແບບຟອມທີ (2), ໂດຍປະຕິບັດຕາມຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານຂ້າສັດ ເລກທີ 0942/ອຄ, ລົງວັນທີ່ 13/5/2010 ແລະ ໃຫ້ແຍກອອກເປັນ 3 ກໍລະນີ ຄືດັ່ງນີ້:

1). ໂຮງງານທີ່ໄດ້ຮັບໃບອະນຸຍາດດຳເນີນກິດຈະການ ຜ່ານມາແລ້ວ, ແຕ່ມາດຕະຖານໂຮງງານ ຍັງບໍ່ທັນຄົບຖ້ວນ ແລະ ບໍ່ທັນຖືກຕ້ອງ ຕາມທີ່ກຳນົດໄວ້ ໃຫ້ເຮັດບົດບັນທຶກການກວດກາເປັນລາຍລັກອັກສອນ ກັບເຈົ້າຂອງໂຮງງານ ຕາມແບບຟອມທີ (3). ໃນນີ້, ເຈົ້າຂອງໂຮງງານຕ້ອງສ້າງແຜນລະອຽດເພື່ອປັບປຸງໂຮງງານຂອງຕົນ ແລ້ວ

ເຮັດບົດບັນທຶກສັນຍາ ຕາມແບບຟອມທີ (4), ໂດຍໃຫ້ກຳນົດເວລາບໍ່ເກີນ ວັນທີ **15/12/2010**.

2). ໂຮງງານທີ່ເຄື່ອນໄຫວໂດຍບໍ່ມີໃບອະນຸຍາດ ເຊັ່ນ: ໃບທະບຽນວິສາຫະກິດ, ໃບທະບຽນອາກອນພາຍໃນ, ໃບອະນຸຍາດດຳເນີນກິດຈະການໂຮງງານ ໃຫ້ແຍກອອກເປັນສອງກໍລະນີ ຄືດັ່ງນີ້:

- **ກໍລະນີທີ 1**: ໂຮງງານສ້າງຕັ້ງຂຶ້ນ ໂດຍມາດຕະຖານບໍ່ຄົບຖ້ວນຕາມທີ່ກຳນົດໄວ້ ຕ້ອງຢຸດເຊົາຖາວອນ. ( ໃນກໍລະນີຢາກດຳເນີນກິດຈະການນີ້ຢູ່ ໃຫ້ປະຕິບັດຕາມຂໍ້ (5/.) ຂອງບົດແນະນຳສະບັບນີ້ ).
- **ກໍລະນີທີ 2**: ໂຮງງານສ້າງຕັ້ງຂຶ້ນ ໂດຍມີມາດຕະຖານຄົບຖ້ວນຕາມທີ່ກຳນົດໄວ້ ຕ້ອງຢຸດເຊົາຊົ່ວຄາວ ເພື່ອປະກອບເອກະສານ ຂໍອະນຸຍາດຕາມຂັ້ນຕອນ, ພ້ອມທັງເຮັດບົດບັນທຶກການກວດກາ ຕາມແບບຟອມທີ (3) ແລະ ບົດບັນທຶກສັນຍາກັບເຈົ້າຂອງໂຮງງານ ເປັນລາຍລັກອັກສອນ ຕາມແບບຟອມທີ (4), ໂດຍໃຫ້ກຳນົດເວລາບໍ່ເກີນວັນທີ **30/9/2010**.

**3/. ຂັ້ນຕອນທີສາມ:** ສະຫລຸບຜົນການກວດກາ ແລະ ດັດສົມໂຮງງານ.

ພາຍຫລັງທີ່ໄດ້ລົງກວດກາແລ້ວ, ໃຫ້ຈັດກອງປະຊຸມ ເພື່ອຄົ້ນຄວ້າ ແລະ ດັດສົມບັນດາໂຮງງານ ໂດຍເຊີນເອົາພາກສ່ວນກ່ຽວຂ້ອງເຂົ້າຮ່ວມ (ຄະນະກຳມະການກວດກາ ແລະ ດັດສົມໂຮງງານ). ໃນນີ້, ການພິຈາລະນາໃຫ້ອີງໃສ່ມາດຕະຖານ ແລະ ເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານຂ້າສັດ ເລກທີ 0942/ອຄ ໂດຍສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ.

**4/.** ມອບໃຫ້ພະແນກ ອ.ຄ ແຂວງ, ນະຄອນຫຼວງ ເປັນຜູ້ຄົ້ນຄວ້າຕົກລົງ ໃນການດັດສົມໂຮງງານຂ້າສັດຢູ່ພາຍໃນແຂວງ, ນະຄອນຫຼວງ ໂດຍສົມທົບກັບຫ້ອງວ່າການແຂວງ ແລະພາກສ່ວນກ່ຽວຂ້ອງຕາມຄວາມເໝາະສົມ.

**5/.** ໃຫ້ພິຈາລະນາອອກໃບອະນຸຍາດດຳເນີນກິດຈະການ ໃຫ້ແກ່ໂຮງງານທີ່ມີມາດຕະຖານ ແລະ ເງື່ອນໄຂຄົບຖ້ວນ ແລະ ຖືກຕ້ອງ, ຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ເລກທີ 1301/ອຄ, ລົງວັນທີ 30/7/07.

**6/.** ໂຮງງານທີ່ຈະຂໍສ້າງຕັ້ງໃໝ່ ຕ້ອງໄດ້ຂໍອະນຸຍາດຕາມຂັ້ນຕອນ, ໂດຍປະຕິບັດຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ເລກທີ 1301/ອຄ, ລົງວັນທີ 30/7/07 ແລະ ຕ້ອງປະຕິບັດໃຫ້ຄົບຖ້ວນ ແລະ ຖືກຕ້ອງ ຕາມມາດຕະຖານ ແລະ ເງື່ອນໄຂທີ່ໄດ້ກຳນົດໄວ້ທຸກປະການ.

**7/.** ສຳລັບໂຮງງານຂ້າສັດຂະໜາດນ້ອຍ ທີ່ນຳໃຊ້ຄົນງານຕ່ຳກ່ວາ 10 ຄົນ ແລະ ນຳໃຊ້ເຄື່ອງຈັກຕ່ຳກ່ວາ 5 ແຮງມ້າລົງມາ, ກະຊວງອຸດສາຫະກຳ ແລະ ການຄ້າ ຈະອອກຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ສົ່ງເສີມ ໂຮງງານຂະໜາດນ້ອຍ ເປັນກໍລະນີສະເພາະ.

**8/.** ງົບປະມານ ໃນການລົງກວດກາ ແລະ ດັດສົມ ໂຮງງານຂ້າສັດໃນຄັ້ງນີ້ ໃຫ້ນຳໃຊ້ງົບປະມານຂອງພະແນກ ອ.ຄ ແຂວງ, ນະຄອນຫລວງ ຕາມເງື່ອນໄຂເໝາະສົມ.

**9/.** ໃຫ້ສະຫລຸບລາຍງານຜົນການກວດກາ ແລະ ດັດສົມໂຮງງານດັ່ງກ່າວ ຕາມແບບຟອມທີ (5) ແລ້ວສົ່ງໃຫ້ກົມອຸດສາຫະກຳ ຢ່າງຊ້າບໍ່ໃຫ້ກາຍວັນທີ **31/12/2010**. ໃນການຈັດຕັ້ງປະຕິບັດຕົວຈິງ ຖ້າຫາກມີຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກແນວໃດ ໃຫ້ລາຍງານຕໍ່ກົມອຸດສາຫະກຳ ຊາບເປັນແຕ່ລະໄລຍະ, ເພື່ອສະເໜີຂໍທິດຊີ້ນຳຈາກຂັ້ນເທິງ ແລະ ພ້ອມກັນແກ້ໄຂໃຫ້ທັນເວລາ.

ດັ່ງນັ້ນ, ຈຶ່ງແນະນຳມາຍັງທ່ານ ເພື່ອຈັດຕັ້ງປະຕິບັດຕາມລະບຽບການ ຢ່າງເຂັ້ມງວດດ້ວຍ.

**ຫົວໜ້າກົມອຸດສາຫະກຳ**

**ຫວ່າງ ພົມມະສັກ**